

# ພາກພະນວກ II

# ແຜນວາດສະແດງການພັດທະນາຂອງເດັກ

## ວິທີການໃຊ້ແຜນວາດ ການພັດທະນາຂອງເດັກເຫຼົ່ານີ້



ການພັດທະນາຂອງເດັກແມ່ນຈະຢູ່ໃນ ຂົງເຂດ: ທາງດ້ານຮ່າງກາຍ (ຮ່າງກາຍ), ທາງດ້ານສະຕິປັນຍາ (ຈິດໃຈ), ທາງ ດ້ານ ການສື່ສານ (ການສັນຍະລັກ ຫຼື ການເວົ້າ) ແລະ ທາງດ້ານ ສັງຄົມ (ການສ້າງສາຍພົວ ພັນກັບຄົນອື່ນ). ການກະທຳໃດໜຶ່ງ ທີ່ເດັກສະແດງ ອອກເລື້ອຍໆນັ້ນ, ແມ່ນລວມຢູ່ໃນບັນດາທັກສະທີ່ມາ ຈາກໃນຂົງເຂດນັ້ນ. ຕົວຢ່າງ ເຊັ່ນ: ເມື່ອເດັກໄດ້ຊູແຂນ ຂອງ ເຂົ້າຂຶ້ນນັ້ນ, ເຂົາຕ້ອງໄດ້ໃຊ້:

- ທັກສະທາງດ້ານຮ່າງກາຍ: ຄືເຂົາໄດ້ຍົກແຂນຂອງເຂົາຂຶ້ນ.
- ທັກສະທາງດ້ານສະຕິປັນຍາ: ເຂົາສາມາດຈື່ທ່ານໄດ້.
- ທັກສະທາງດ້ານການສື່ສານ: ເຂົາບອກທ່ານວ່າເຂົາຕ້ອງການຫຍັງ.
- ທັກສະສັງຄົມ: ເຂົາມີຄວາມມ່ວນຊື່ນ ກັບສິ່ງທີ່ທ່ານເຮັດຂຶ້ນມາ.



6 ເດືອນ 12 ເດືອນ 2 ປີ

*ແຜນວາດໄດ້ສະແດງໃຫ້ເຫັນວ່າ ທັກສະທາງດ້ານຮ່າງກາຍຂອງເດັກ ໄດ້ມີການປ່ຽນແປງຄືແນວໃດ ເມື່ອພວກເຂົາເຕີບໂຕຂຶ້ນ.*

ແຜນວາດທີ່ຢູ່ໃນໜ້ານີ້ ສະແດງໃຫ້ເຫັນທາງດ້ານທັກສະທີ່ເດັກຮຽນຮູ້ໃນໄວອາຍຸທີ່ ເດັກເກືອບທຸກຄົນໄດ້ຮຽນຮູ້. ທ່ານສາມາດໃຊ້ແຜນວາດດັ່ງກ່າວນີ້ ເພື່ອເອົາຂໍ້ມູນທົ່ວໄປກ່ຽວກັບວ່າ ລູກຂອງທ່ານມີການພັດທະນາແນວໃດ ແລະ ຊ່ວຍທ່ານໃນການຕັດສິນໃຈວ່າມີທັກສະໃດແດ່ ທີ່ລູກຂອງທ່ານຕ້ອງການຮຽນຮູ້.

### ➤ ຈະຮູ້ໄດ້ແນວໃດວ່າມີທັກສະໃດແດ່ ທີ່ລູກຂອງທ່ານຕ້ອງການທີ່ຈະຮຽນຮູ້

ພິສູດດ້ວຍການເຮັດແຜນວາດ ສຳລັບກຸ່ມເດັກນ້ອຍຜູ້ທີ່ມີອາຍຸໃກ້ຄຽງກັບລູກຂອງທ່ານ. ໃນແຜນວາດ ໃຫ້ຂີດອ້ອມເອົາບັນດາທັກສະທີ່ລູກຂອງທ່ານໄດ້ສະແດງອອກ, ແລ້ວທ່ານ ອາດຈະເຫັນໄດ້ວ່າ ລູກຂອງທ່ານບໍ່ໄດ້ສະແດງອອກທັກສະໃດທັກສະໜຶ່ງ ທີ່ເດັກຄົນອື່ນ ເຊິ່ງມີອາຍຸຮຸ່ນຮາວຄາວດຽວກັນສະແດງອອກ, ການທີ່ໄດ້ຮູ້ໃນສິ່ງດັ່ງກ່າວນີ້ ສາມາດຊ່ວຍທ່ານຕັດສິນໃຈໄດ້ວ່າ ກິດຈະກຳໃດທີ່ທ່ານຕ້ອງການເຮັດກັບລູກຂອງທ່ານ.

**ຖ້າການພັດທະນາຂອງລູກທ່ານ ຫາກຊ້າກວ່າເດັກຄົນອື່ນທີ່ມີອາຍຸຮຸ່ນດຽວກັນ**

ມັນສຳຄັນຫຼາຍທີ່ຈະເຮັດວຽກໃນບັນດາທັກສະທີ່ລູກຂອງທ່ານຕ້ອງການທີ່ຈະຮຽນຮູ້ຕໍ່ໄປນັ້ນ, ເຖິງແມ່ນວ່າ ມັນແມ່ນບັນດາທັກສະທີ່ເດັກຄົນອື່ນກໍ່ຮຽນຮູ້ໄດ້ ແຕ່ຕອນຕົ້ນພຸ້ນແລ້ວກໍ່ຕາມ. ເມື່ອລູກຂອງທ່ານຫາກໄດ້ບັນຊາບັນດາທັກສະພື້ນຖານຫຼາຍຂຶ້ນແລ້ວ, ເຂົາອາດຈະສາມາດຮຽນຮູ້ທັກສະທີ່ເດັກຄົນອື່ນໆກຳລັງຮຽນຮູ້ນັ້ນ. ຈົ່ງພະຍາຍາມສອນທັກສະຂອງເດັກກ່ອນທີ່ເຂົາຈະມີຄວາມພ້ອມ, ຖ້າບໍ່ດັ່ງນັ້ນ, ຈະນຳໄປສູ່ຄວາມທຸກຫງິດຕໍ່ທັງສອງຝ່າຍຄື: ທ່ານ ແລະ ລູກຂອງທ່ານເອງ.




ໃນແຜນວາດຂ້າງເທິງນີ້ ຜູ້ເປັນແມ່ຄົນໜຶ່ງໄດ້ຂີດອ້ອມເອົາກ່ຽວກັບບັນດາທັກສະທີ່ລູກ ມີອາຍຸ 8 ເດືອນຂອງເຂົາ, ທີ່ສາມາດສະແດງອອກໄດ້. ລູກຂອງເຂົາຕ້ອງການຄວາມຊ່ວຍເຫຼືອໃນການຮຽນຮູ້ທັກສະອື່ນໆ ໃນແຕ່ລະຂົງເຂດ, ແຕ່ວ່າເຂົາຕ້ອງການຄວາມຊ່ວຍເຫຼືອ ໃນດ້ານການສື່ສານເປັນສ່ວນຫຼາຍ ແລະ ໃນຂົງເຂດທາງດ້ານສະຕິປັນຍາ. ສຳລັບເດັກຄົນນີ້, ຄອບຄົວຂອງເຂົາຄວນຈະເຮັດໃຫ້ມີການສື່ສານຂັ້ນພື້ນຖານ (ບົດທີ 4) ແລະ ເລີ່ມທີ່ຈະເຂົ້າສູ່ການຮຽນຮູ້ພາສາ.

ສຳລັບເດັກຜູ້ທີ່ມີອາຍຸຫຼາຍກວ່ານີ້, ທ່ານສາມາດທີ່ຈະເລີ່ມຕົ້ນດ້ວຍການສັງເກດໃນ ແຜນວາດທີ່ໃກ້ຄຽງກັບອາຍຸຂອງເຂົາທີ່ສຸດ. ແຕ່ທ່ານອາດຕ້ອງໄດ້ເບິ່ງໃນແຜນວາດສຳລັບຂອງເດັກຜູ້ທີ່ມີອາຍຸອ່ອນກວ່າ ເພື່ອສັງເກດເບິ່ງບັນດາທັກສະທີ່ເດັກສາມາດເຮັດໄດ້. ສ່ວນແຜນວາດອື່ນໆນັ້ນ ຈະເປັນການໃຫ້ຄວາມຄິດເຫັນກ່ຽວກັບບັນດາປະເພດຂອງທັກສະທີ່ລູກຂອງທ່ານຕ້ອງການຮຽນຮູ້, ກ່ອນທີ່ເຂົາຈະສາມາດຮຽນຮູ້ທັກສະອື່ນໆຄືກັບເດັກຄົນອື່ນໆ ຢູ່ໃນແຜນວາດ ທີ່ມີອາຍຸໃກ້ຄຽງກັນທີ່ສຸດ.

ຖ້າຫາກລູກຂອງທ່ານບໍ່ສາມາດຮັບຟັງໄດ້ດີກໍ່ເປັນຄ້າຍຄືກັນກັບວ່າ: ເຂົາຕ້ອງການ ຄວາມຊ່ວຍເຫຼືອພິເສດໃນການພັດທະນາທັກສະທາງດ້ານການສື່ສານ, ທາງດ້ານສະຕິປັນຍາ ແລະ ທາງດ້ານສັງຄົມຂອງເຂົາ, ຢູ່ໃນບົດທີ 1 ແລະ ບົດທີ 3 ຈະຊ່ວຍໄດ້ຫຼາຍ ເພາະວ່າ ມັນໄດ້ ອະທິບາຍລະອຽດເຖິງບັນດາວິທີທີ່ເດັກຮຽນຮູ້ພາສາ ແລະ ຍັງໄດ້ໃຫ້ເຄັດລັບທົ່ວໄປໃນການທີ່ຈະເຮັດກິດຈະກຳກັບເດັກໃໝ່ນັ້ນ. ເພາະວ່າທັກສະທາງດ້ານສະຕິປັນຍາຂອງເດັກ ແມ່ນໄດ້ມີການຂະຫຍາຍຕົວໄປພ້ອມກັບທັກສະການສື່ສານ, ບັນດາກິດຈະກຳທີ່ຢູ່ໃນບົດທີ 4, 7, 8 ແລະ 9 ຈະຊ່ວຍໃຫ້ເດັກມີການພັດທະນາທາງດ້ານການສື່ສານ ແລະ ທາງດ້ານສະຕິປັນຍາຂອງເຂົາ. ໃນບົດທີ 12, ເຊິ່ງກ່ຽວຂ້ອງກັບທັກສະທາງສັງຄົມນັ້ນແມ່ນໄດ້ມີການແນະນຳຫຼາຍວິທີ ທີ່ທ່ານສາມາດຊ່ວຍເດັກໃຫ້ມີການພັດທະນາການປະຕິສຳພັນສັງຄົມຂອງເຂົາໄດ້.

ໃນແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກແດງຫຼາຍໆຄົນໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 3 ເດືອນ.




ເດັກທີ່ພິການທາງຫູ ແລະ ຜູ້ທີ່ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະໄດ້ຮັບຜົນປະໂຫຍດຈາກ ບັນດາກິດຈະກຳທີ່ຊ່ວຍພວກເຂົາໃນການພັດທະນາທັກສະທັງໝົດໃນແຕ່ລະຂົງເຂດນັ້ນ. ບັນດາຮູບພາບເປັນພຽງແຕ່ຕົວຢ່າງຂອງບັນດາທັກສະເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ແມ່ນໃຫ້ເບິ່ງໃນພາກສ່ວນຂອງການສື່ສານຕື່ມ. ຄືທ່ານບໍ່ຈຳເປັນຕ້ອງເປົ່າປີ່ໃຫ້ເດັກຟັງ, ໃຫ້ຖາມຕົວທ່ານເອງວ່າ ຄວນຈະເຮັດຫຍັງແທນ, ຖ້າເຂົາຫາກມີປະຕິລິຍາຕໍ່ສຽງ ແລະ ການເຄື່ອນໄຫວໂດຍທັນທີແທ້.

**ຕ້ອງເອົາໃຈໃສ່ສະເໝີວ່າ ຈຸດປະສົງແມ່ນເພື່ອໃຫ້ລູກຂອງທ່ານ ໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**

ແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກຫຼາຍໆຄົນ ໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 6 ເດືອນ.




ເດັກທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະໄດ້ຮັບຜົນປະໂຫຍດຈາກບັນດາກິດຈະກຳ ທີ່ຊ່ວຍພວກເຂົາ ໃນການພັດທະນາທັກສະຕ່າງໆ ໃນແຕ່ລະຂົງເຂດນັ້ນ, ບັນດາຮູບພາບ ເປັນພຽງແຕ່ຕົວຢ່າງຂອງທັກສະຕ່າງໆເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ ແມ່ນໃຫ້ເບິ່ງໃນພາກສ່ວນຂອງຮ່າງກາຍລູກຂອງທ່ານບໍ່ຈຳເປັນທີ່ຈະຫຼິ້ນກັບເຄື່ອງຫຼິ້ນທີ່ສັ່ນແລ້ວເກີດມີສຽງເທົ່ານັ້ນ. ໃຫ້ຖາມຕົວທ່ານເອງວ່າ ມີວິທີໃດເໝາະສົມກວ່າ ເພື່ອທີ່ຈະເຮັດໃຫ້ລູກຂອງທ່ານມີການສັ່ນ ຫຼື ຢຽດແຂນ ແລະ ຂາອອກ.

**ຕ້ອງໃສ່ໃຈສະເໝີວ່າ ຈຸດປະສົງກໍ່ແມ່ນເພື່ອໃຫ້ລູກຂອງທ່ານ ໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**

ແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກຫຼາຍໆຄົນໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 12 ເດືອນ.




ເດັກທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະໄດ້ຮັບຜົນປະໂຫຍດຈາກບັນດາກິດຈະກຳ ທີ່ຊ່ວຍພວກເຂົາ ໃນການພັດທະນາທັກສະຕ່າງໆ ໃນແຕ່ລະຂົງເຂດນັ້ນ, ບັນດາຮູບພາບ ເປັນພຽງແຕ່ບັນດາຕົວຢ່າງຂອງທັກສະຕ່າງໆເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ ແມ່ນໃຫ້ເບິ່ງໃນພາກສ່ວນຂອງສັງຄົມທ່ານບໍ່ຈຳເປັນທີ່ຈະຫຼິ້ນເກມເຊື່ອງຕົວ, ໃຫ້ຖາມຕົວທ່ານເອງວ່າ ມີວິທີໃດເໝາະສົມກ່ວາ ເພື່ອທີ່ຈະເຮັດໃຫ້ລູກຂອງທ່ານ ມີຄວາມມ່ວນຊື່ນກັບການຫຼິ້ນເກມສັງຄົມນັ້ນ.

**ຕ້ອງໃສ່ໃຈສະເໝີວ່າ ຈຸດປະສົງກໍ່ແມ່ນເພື່ອໃຫ້ລູກຂອງທ່ານໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**

ແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກຫຼາຍໆຄົນ ໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 2 ປີ.




ເດັກທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີ ນັ້ນຈະໄດ້ຮັບຜົນປະໂຫຍດຈາກບັນດາກິດຈະກຳ ທີ່ຊ່ວຍພວກເຂົາ ໃນການພັດທະນາທັກສະຕ່າງໆ ໃນແຕ່ລະຂົງເຂດ, ບັນດາຮູບພາບ ເປັນພຽງແຕ່ຕົວຢ່າງຂອງທັກສະຕ່າງໆເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ ແມ່ນໃຫ້ເບິ່ງໃນພາກສ່ວນສະຕິປັນຍາລູກຂອງທ່ານບໍ່ຈຳເປັນຕ້ອງຫລິ້ນກອງ, ໃຫ້ຖາມຕົວທ່ານເອງວ່າ ມີວິທີໃດເໝາະສົມກວ່າ ເພື່ອທີ່ຈະເຮັດໃຫ້ລູກຂອງທ່ານ ມີການໃຊ້ບັນດາວັດຖຸທີ່ມີຄວາມສຳພັນກັນນັ້ນ.

**ຕ້ອງໃສ່ໃຈສະເໝີວ່າ ຈຸດປະສົງກໍ່ແມ່ນເພື່ອໃຫ້ລູກຂອງທ່ານໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**

ໜ 214

ແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກຫຼາຍໆຄົນ ໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 3 ປີ.




ເດັກທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະໄດ້ຮັບຜົນປະໂຫຍດຈາກບັນດາກິດຈະກຳ ທີ່ຊ່ວຍພວກເຂົາ ໃນການພັດທະນາທັກສະຕ່າງໆ ໃນແຕ່ລະຂົງເຂດນັ້ນ, ບັນດາຮູບພາບ ເປັນພຽງແຕ່ຕົວຢ່າງຂອງທັກສະຕ່າງໆເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ ແມ່ນໃຫ້ເບິ່ງໃນພາກສ່ວນຂອງສັງຄົມ ລູກຂອງທ່ານບໍ່ຈຳເປັນຈະຕ້ອງກວາດພື້ນ, ໃຫ້ຖາມຕົວທ່ານເອງວ່າ ມີວຽກຂອງຄອບຄົວອັນອື່ນເໝາະສົມກວ່າ ທີ່ເຮັດໃຫ້ລູກຂອງທ່ານມີຄວາມສະໜຸກສະໜານໃນການຊ່ວຍວຽກຂອງຄອບຄົວນັ້ນ.

**ຕ້ອງໃສ່ໃຈສະເໝີວ່າ ຈຸດປະສົງກໍ່ແມ່ນເພື່ອໃຫ້ລູກຂອງທ່ານໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**

ແຕ່ລະພາກສ່ວນຂອງວົງນີ້ ໄດ້ສະແດງໃຫ້ເຫັນການພັດທະນາໃນແຕ່ລະຂົງເຂດທີ່ແຕກຕ່າງກັນ. ບັນດາຮູບພາບ ແລະ ຄຳເວົ້າແມ່ນຕົວຢ່າງຂອງບັນດາທັກສະທີ່ເດັກຫຼາຍໆຄົນ ໄດ້ສະແດງອອກ ເມື່ອພວກເຂົາມີອາຍຸ 5 ປີ.




ເດັກທີ່ພິການທາງຫູ ຫຼື ບໍ່ສາມາດຮັບຟັງໄດ້ດີນັ້ນ ຈະໄດ້ຮັບຜົນປະໂຫຍດຈາກບັນດາກິດຈະກຳ ທີ່ຊ່ວຍພວກເຂົາ ໃນການພັດທະນາທັກສະຕ່າງໆ ໃນແຕ່ລະຂົງເຂດນັ້ນ, ບັນດາຮູບພາບເປັນພຽງແຕ່ຕົວຢ່າງຂອງທັກສະຕ່າງໆເທົ່ານັ້ນ. ໃນຕົວຢ່າງດັ່ງກ່າວນີ້ ແມ່ນໃຫ້ເບິ່ງໃນພາກສ່ວນຂອງສັງຄົມ ລູກຂອງທ່ານບໍ່ຈຳເປັນຈະຕ້ອງມີການຫລິ້ນຕົນລົດ, ໃຫ້ຖາມຕົວທ່ານເອງວ່າ ຖ້າລູກຂອງທ່ານເຂົ້າໃຈກົດລະບຽບຄືກັບເດັກຄົນອື່ນ.

**ຕ້ອງໃສ່ໃຈສະເໝີວ່າ ຈຸດປະສົງກໍ່ແມ່ນເພື່ອໃຫ້ລູກຂອງທ່ານໄດ້ເຮັດກິດຈະກຳທີ່ເດັກຄົນອື່ນໆ ທີ່ມີອາຍຸຮຸ່ນດຽວກັນນັ້ນ ໄດ້ສະແດງອອກຢູ່ໃນຊຸມຊົນຂອງທ່ານ.**